

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ບົດລາຍງານ

# ແຜນຈັດສັນ ການນຳໃຊ້ທີ່ດິນ ບ້ານ ພູຊ້າງຄຳ

# ນະຄອນ ຫຼວງພະບາງ, ແຂວງ ຫຼວງພະບາງ




ກະກຽມໂດຍ:

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງພະບາງ

ຂະແໜງ ຊັບພະຍາກອນນ້ຳ ອຸຕຸນິຍົມ ແລະ ອະທິກາກະສາດ

2025

**ສາລະບານ**


I. ຈຸດປະສົງ ແລະ ລະດັບຄາດໝາຍ ........ 1

1. ຈຸດປະສົງ ........ 1
2. ລະດັບຄາດໝາຍ ........ 1
3. ຂັ້ນຕອນການຈັດຕັ້ງປະຕິບັດ ........ 2

II. ສະພາບລວມຂອງບ້ານ ........ 2

1. ປະຫວັດຄວາມເປັນມາຂອງບ້ານ ........ 2
2. ດ້ານການປົກຄອງ ........ 2
3. ດ້ານການຄຸ້ມຄອງ ........ 3
4. ສະພາບການນຳໃຊ້ທີ່ດິນ ........ 3
5. ດ້ານເສດຖະກິດສັງຄົມ ........ 5
6. ດ້ານວັດທະນະທຳຮີດຄອງປະເພນີ ........ 5
7. ດ້ານວຽກງານວັດທະນະທຳ - ສັງຄົມ ........ 5
8. ດ້ານວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ........ 5

**ສາລະບານຕາຕະລາງ**

ຕາຕະລາງ 1 ເຂດແດນ ຕິດກັບ ສະໜາມບິນຫຼວງພະບາງ......3
ຕາຕະລາງ 2 ເຂດແດນ ຕິດກັບ ບ້ານ ວັງເງິນ......3
ຕາຕະລາງ 3 ເຂດແດນ ຕິດກັບ ບ້ານ ນູນສະຫວາດ......3
ຕາຕະລາງ 4 ເຂດແດນ ຕິດກັບ ບ້ານ ພູເຫຼັກຈະເລີນ......4
ຕາຕະລາງ 5 ເຂດແດນ ຕິດກັບ ບ້ານ ຫາດຫ່ຽນ......4
ຕາຕະລາງ 6 ປະເພດ ການນຳໃຊ້ທີ່ດິນຂອງບ້ານ......5

**ສາລະບານ ຮູບ**

ຮູບທີ່ 1 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ.....7
ຮູບທີ່ 2 ຮູບພາບກະກຽມກ່ອນ ລົງສຳຫຼວດພາກສະໜາມ.....8
ຮູບທີ່ 3 ຮູບພາບ ລົງສຳຫຼວດພາກສະໜາມ.....8

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້ານະຄອນ ຫຼວງພະບາງ

ເລກທີ 205 /ຈນ-ຫຼບ

ລົງວັນທີ 18 ກຸມພາ 2025

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາແຜນການນຳໃຊ້ທີ່ດິນ ແລະ ການປັກຫຼັກໝາຍ ຂອງ ບ້ານພູຊ້າງຄຳ ກັບບ້ານອ້ອມຂ້າງທີ່ມີເຂດແດນຕິດກັນ ພາຍໃນ ນະຄອນ ຫຼວງພະບາງ

- **ອີງຕາມ**: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015;
- **ອີງຕາມ**: ກົດໝາຍວ່າດ້ວຍທີ່ດິນ, ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- **ອີງຕາມ:** ຂໍ້ຕົກລົງຂອງທ່ານເຈົ້າແຂວງຫຼວງພະບາງ, ສະບັບເລກທີ 326/ຈຂ.ຫຼບ, ລົງວັນທີ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງ ນະຄອນ ຫຼວງພະບາງ.
- **ອີງຕາມ:** ໜັງສືສະເໜີຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນ, ສະບັບເລກທີ 20/ຫຊສມ, ລົງວັນທີ 3 ກຸມພາ 2025.

## ເຈົ້ານະຄອນ ຫຼວງພະບາງ ຕົກລົງ:

**ມາດຕາ 1:** ເຫັນດີຮັບຮອງເອົາແຜນການນຳໃຊ້ທີ່ດິນ ແລະ ການປັກຫຼັກໝາຍເຂດແດນຂອງ ບ້ານ ພູຊ້າງຄຳ ທີ່ຕິດກັບ ບ້ານຫາດຮ່ຽນ, ບ້ານວັງເງິນ, ບ້ານພູເຫຼັກຈະເລີນ ແລະ ບ້ານນູນສະຫວາດ ນະຄອນ ຫຼວງພະບາງ, ແຂວງຫຼວງພະບາງ.

**ມາດຕາ 2:** ມອບໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນ ເປັນໃຈກາງສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງນຳໃຊ້ທີ່ດິນ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມແຜນຈັດສັນທີ່ດິນ ສະບັບນີ້, ທຸກການປ່ຽນແປງປະເພດການນຳໃຊ້ທີ່ດິນ ຈະຕ້ອງໄດ້ຜ່ານການພິຈາລະນາຈາກຂະແໜງການທີ່ກ່ຽວຂ້ອງ ແລະ ນຳສະເໜີໃຫ້ຂັ້ນເທິງ ອະນຸຍາດຕາມລະບຽບຫຼັກການ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້ານະຄອນ ຫຼວງພະບາງ**

ວຽງທອງ ຫັດສະຈັນ

Viengthong HATSACHANH

**ບ່ອນນຳສົ່ງ**

- ຫ້ອງການ ຊສ ນະຄອນ 1 ສະບັບ;
- ພາກສ່ວນທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫຼວງພະບາງ
ນະຄອນ ຫຼວງພະບາງ
ຂາເຂົ້າ ເລກທີ 204
ລົງວັນທີ 11.2.25

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງພະບາງ ເລກທີ...20.....ຫຊສມ

ລົງວັນທີ 3 2 2025

# ໃບສະເໜີ

ຮຽນ: ທ່ານ ເຈົ້ານະຄອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ຂໍອະນຸມັດລົງລາຍເຊັນ ໃສ່ຂໍ້ຕົກລົງຮັບຮອງແຜນຈັດສັນທີ່ດິນ ແລະ ການປົກຫຼັກໝາຍ ເຂດແດນ ບ້ານ ພູຊ້າງຄຳ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015,
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ

ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫຼວງພະບາງ ຂໍຖືເປັນກຽດ ເປັນຢ່າງ ສູງຮຽນສະເໜີ ມາຍັງທ່ານເພື່ອຂໍອະນຸມັດລົງລາຍເຊັນໃສ່ຂໍ້ຕົກລົງ ຮັບຮອງແຜນຈັດສັນທີ່ດິນ ແລະ ການປົກຫຼັກໝາຍເຂດແດນຂັ້ນບ້ານຂອງ ບ້ານ ພູຊ້າງຄຳ, ນະຄອນ ຫຼວງພະບາງ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມເຫັນສົມຄວນດ້

ຫົວໜ້າຫ້ອງການ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງພະບາງ

ຫ້ອງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນ-ຫຼວງພະບາງ

ສຸພານຸສິດ ອາລຸນ

Mr Souphanousith AROUNE

**ຄຳນຳ**

ແຂວງ ຫຼວງພະບາງ ໄດ້ສ້າງແຜນຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ເພື່ອເປັນບ່ອນອີງໃນການຄຸ້ມຄອງ, ນຳໃຊ້ຊັບພະຍາກອນທຳມະຊາດທີ່ກຳລັງເປັນບັນຫາສຳຄັນ ໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນໄລຍະໃໝ່, ສ້າງໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ຍຸຕິທຳ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ມີພື້ນຖານໃນການຫັນເປັນອຸດສາຫະກຳ-ທັນສະໄໝ, ສະເລ່ຍລາຍໄດ້ຕໍ່ຫົວຄົນ 2.362 ໂດລາ ໃນປີ 2020; ການພັດທະນາສົມດຸນລະຫວ່າງເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ, ສອດຄ່ອງກັບສະພາບຄວາມເປັນຈິງຕາມເງື່ອນໄຂຕົວຈິງ, ທ ່າແຮງທີ່ບົ່ມຊ້ອນຂອງແຂວງ, ລະບົບກົງຈັກການບໍລິຫານ, ການຄຸ້ມຄອງມີຄວາມເຂັ້ມແຂງ,ຊັບພະຍາກອນມະນຸດ ໄດ້ຮັບການພັດທະນາໃຫ້ມີຄຸນນະພາບ, ພຽງພໍ ກັບຄວາມຕ້ອງການໃນການພັດທະນາ,ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງມີປະສິດທິຜົນ.

ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານສະບັບນີ້ເປັນເຄື່ອງມືທາງດ້ານນິຕິກຳທີ່ສຳຄັນທີ່ອຳນວຍຄວາມສະດວກໃຫ້ແກ່ການຕັດສິນໃຈໃນການພັດທະນາໃຫ້ໄວຂຶ້ນໂດຍສະເພາະການພິຈາລະນາປັດໃຈທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມເພື່ອກຳນົດແຜນການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ສອດຄ່ອງກັບແຜນແມ່ບົດການຈັດສັນທີ່ດິນແຫ່ງຊາດ, ຄຸ້ມຄອງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຕາມລະບຽບກົດໝາຍ, ນຳໃຊ້ຊັບພະຍາກອນທີ່ມີ ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ທ້ອງຖິ່ນ. ໃນການ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງຈະແຈ້ງ ເປັນຕົ້ນແມ່ນເຂດທີ່ຢູ່ອາໄສ, ເຂດກະສິກຳ, ເຂດອຸດສາຫະກຳ ແລະ ເຂດອື່ນໆ. ໂດຍໄດ້ກຳນົດຫຼັກການ ແລະ ມາດຕະການ ໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ພ້ອມທັງມີມາດຕະການໃນການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງແຕ່ລະຂົງເຂດວຽກງານ.

ສະນັ້ນ, ເພື່ອຈັດຕັ້ງປະຕິບັດບັນດາວິໄສທັດ ຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມຂອງ ແຂວງ ຫຼວງພະບາງແຕ່ລະໄລຍະໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຈຸດສຸມ, ມີຄວາມໝັ້ນຄົງ, ມີຄວາມຍືນຍົງແມ່ນມີຄວາມຈຳເປັນຕ້ອງໄດ້ນຳໃຊ້ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ສະບັບນີ້ ເປັນທິດທາງ, ນະໂຍບາຍອັນສຳຄັນເຂົ້າໃນການພັດທະນາໃນແຕ່ລະດ້ານ.

## ສັງລວມຫຍໍ້

ບ້ານ ພູຊ້າງຄໍາ ແມ່ນບ້ານໜຶ່ງທີ່ຕັ້ງຢູ່ໃນເຫດສະບານນະຄອນ ຫຼວງພະບາງ ເຊິ່ງປະກອບມີ 733 ຄອບຄົວ, ມີພົນລະເມືອງທັງໝົດ 4.454 ຄົນ, ຍິງ 2012 ຄົນ, ມີ 39 ໜ່ວຍຄຸ້ມຄອງ, ເຜົ່າລາວລຸ່ມ ມີ 359 ຄອບຄົວ, ມີພົນລະເມືອງທັງໝົດ 2286 ຄົນ, ຍິງ 867 ຄົນ, ເຜົ່າກຶມມຸ ມີ 131 ຄອບຄົວ, ມີພົນລະເມືອງ ທັງໝົດ 901 ຄົນ, ຍິງ 308 ຄົນ, ເຜົ່າມົ້ງ ມີ 212 ຄອບ ຄົວ, ມີພົນລະເມືອງທັງໝົດ 1267 ຄົນ, ຍິງ 722 ຄົນ,

ມີເຂດແດນ ຕິດກັບ 4 ບ້ານ ຄື: ເໜືອ ຕິດກັບ ສະໜາມບິນສາກົນຫຼວງພະບາງ, ທິດໃຕ້ ຕິດກັບ ບ້ານ ວັງເງິນ ແລະ ບ້ານ ນູນສະຫວາດ, ທິດຕາເວັນອອກ ຕິດກັບ ບ້ານ ພູເຫຼັກຈະເລີນ, ທິດຕາເວັນຕົກ ຕິດກັບ ບ້ານ ຫາດຫ່ຽນ

ການນໍາໃຊ້ທີ່ດິນກວມສ່ວນຫຼາຍ ແມ່ນ ທີ່ດິນປ່າໄມ້ ກວມເອົາ 50,2 % ຂອງເນື້ອທີ່ດິນທັງໝົດ, ນອກຈາກນີ້ຍັງມີທີ່ດິນກະສິກໍາ, ທີ່ດິນປຸກສ້າງ, ທີ່ດິນວັດທະນະທໍາ, ທີ່ດິນອຸດສາຫະກໍາ, ທີ່ດິນໂຍທາທິການ ແລະ ທີ່ດິນບໍລິເວນນໍ້າ ເຊິ່ງມີລາຍລະອຽດດັ່ງນີ້: ປະເພດທີ່ດິນ ກະສິກໍາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 16,48 ກວມເອົາ 5,8 % ເປັນປະເພດດິນນາ. ປະເພດທີ່ດິນປຸກສ້າງ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 108,34 ເຮັກຕາ, ປະກອບມີ 3 ປະເພດຄື: ທີ່ດິນປຸກສ້າງ ສ່ວນບຸກຄົນ 99,55 ເຮັກຕາ, ກວມເອົາ 35,01%, ທີ່ດິນປຸກສ້າງ ຂອງລັດ 0,92 ເຮັກຕາ, ກວມເອົາ 0,32% ແລະ ທີ່ດິນຂະຫຍາຍການປຸກສ້າງ ມີເນື້ອທີ່ 7,87 ເຮັກຕ່າ, ກວມເອົາ 2,77 %. ປະເພດທີ່ດິນວັດທະນະທໍາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 2 ເຮັກຕາ, ກວມເອົາ 0,7 %. ປະເພດ ທີ່ດິນ ປ່າໄມ້ ມີ ເນື້ອທີ່ 142,74 ເຮັກຕ່າ, ກວມເອົາ 50,20% ເຊິ່ງປະກອບມີ 3 ປະເພດຄື: ທີ່ດິນປ່າສະຫງວນ ມີເນື້ອທີ່ 1,25 ເຮັກຕາ, ກວມເອົາ 0,44%, ທີ່ປິນປ່າປ້ອງກັນ ມີເນື້ອທີ່ 101,53 ເຮັກຕາ, ກວມເອົາ 35,71% ແລະ ທີ່ດິນປູກໄມ້ອຸກສາຫະກໍາ ມີເນື້ອທີ່ 39,96 ເຮັກຕາ, ກວມເອົາ 14,05%, ປະເພດທີ່ດິນ ໂຍທາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 81,8 ເຮັກຕາ, ກວມເອົາ 5,09% ປະກອບມີ 3 ປະເພດຄື: ທີ່ດິນທາງປູຢາງ ມີເນື້ອທີ່ 8,93 ເຮັກຕາ, ກວມເອົາ 3,14%, ທີ່ດິນທາງດິນແດງ 2,20 ເຮັກຕາ, ກວມເອົາ 0,77% .

# I. ຈຸດປະສົງ ແລະ ລະດັບຄາດໝາຍ

## 1. ຈຸດປະສົງ

ນະຄອນຫຼວງພະບາງ ຖືວ່າເປັນສູນກາງການຂົນສົ່ງ ແລະ ການທ່ອງທ່ຽວທີ່ສຳຄັນທາງພາກເໜືອຂອງ ສປປ ລາວ ທີ່ມີການຂະຫຍາຍຕົວໄວ ຊຶ່ງມີທີ່ຕັ້ງຢູ່ລະຫວ່າງຈຸດທີ່ເຊື່ອມຕໍ່ຂອງແມ່ນໍ້າຂອງ ແລະ ສາຍນໍ້າຄານ. ພື້ນທີ່ບໍລິເວນທາງດ້ານປະຫວັດສາດ ແລະ ພູມສັນຖານອ້ອມຮອບທີ່ສຳຄັນຂອງນະຄອນດັ່ງກ່າວ ໄດ້ຖືກບັນທຶກໄວ້ໃນເອກະສານທາງດ້ານມໍລະດົກໂລກຂອງອົງການສະຫະປະຊາຊາດເພື່ອ ການສຶກສາ ວິທະຍາສາດ ແລະ ວັດທະນະທຳ (ຫຼື ອົງການ UNESCO) ໃນປີ 1995

ນະຄອນຫຼວງພະບາງ, ກໍເປັນເມືອງໜຶ່ງທີ່ນອນໃນເປົ້າໝາຍຂອງໂຄງການຄຸ້ມຄອງຊັບພະຍາກອນ ນໍ້າແບບເຊື່ອມສານ ແລະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໂດຍອີງໃສ່ທ່າແຮງຂອງລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຼຽງ ແລະ ຕົວເມືອງຫຼວງພະບາງ. ນະຄອນຄອນຫຼວງພະບາງຕັ້ງຢູ່ຈຸດໃຈກາງຂອງແຂວງຫຼວງພະບາງ, ມີພົນລະເມືອງທັງໝົດ 96.755 ຄົນ, ຍິງ 48.055 ຄົນ, ມີທັງໝົດ 17.480 ຄອບຄົວ, ມີຈຳນວນ 115 ບ້ານ, ໃນນັ້ນ 65 ບ້ານແມ່ນນອນຢູ່ໃນເຫດສະບານແລະ 50 ບ້ານຢູ່ນອກເຫດສະບານ; ໂດຍໄດ້ກຳນົດເປັນ 15 ກຸ່ມບ້ານ, ມີ 9 ກຸ່ມໃນເຫດສະບານແລະ 6 ກຸ່ມນອກເຫດສະບານ, ປະຊາຊົນສ່ວນຫຼາຍຖືເອົາອາຊີບການບໍລິການ, ການປຸງແຕ່ງ, ການຄ້າຂາຍແລະຜະລິດກະສິກຳເປັນຕົ້ນຕໍ,ອັດຕາການເພີ່ມຂຶ້ນຂອງປະຊາກອນນະຄອນຫຼວງພະບາງສະເລ່ຍ 1,1 %

ສະພາບດິນຟ້າອາກາດມີອຸນຫະພູມສະເລ່ຍສູງສຸດ 35,1 ອົງສາແລະຕໍ່າສຸດສະເລ່ຍ 16,5 ອົງສາ, ປະລິມານນໍ້າຝົນໃນລະດັບສະເລ່ຍ 248,9 ມລ/ປີ, ລະດັບຄວາມສູງສະເລ່ຍ 247 ແມັດເຖິງ 1.425 ແມັດ (ທຽບໃສ່ລະດັບໜ້ານໍ້າທະເລ); ໃນແຕ່ລະປີມັກເກີດມີໄພພິບັດຈາກທຳມະຊາດຈຳນວນບໍ່ໜ້ອຍໂດຍສະເພາະແມ່ນລົມພະຍຸລະດູຮ້ອນ, ຝົນຕົກແຮງມີດິນເຊາະເຈື່ອນ, ນໍ້າໄຫຼສຸ, ນໍ້າຖ້ວມ, ຖະໜົນຫົນທາງເປ່ເພແລະອັກຄີໄພໄຟໄໝ້ອື່ນໆ, ເຮັດໃຫ້ມີຜົນກະທົບຕໍ່ ເຮືອນຊານບ້ານຊ່ອງ, ທີ່ຢູ່ອາໄສ, ຜົນຜະລິດກະສິກຳ, ການສັນຈອນ, ຍິ່ງກວ່ານັ້ນຈົນເຖິງຂັ້ນຄົນເຮົາເສຍຊີວິດ; ສະເລ່ຍເປັນມູນຄ່າເສຍຫາຍ 64.007.000 ກີບ.

ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ , ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວ ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະເຂດ. ດັ່ງນັ້ນ, ຈຸດປະສົງຂອງການວາງແຜນສຳຫຼວດຈັດສັນທີ່ດິນຕ້ອງໄດ້ເລັ່ງໃສ່ໃນຂົງເຂດວຽກງານຫຼັກລຸ່ມນີ້:

1. ສຳຫຼວດ ປະເພດການນຳໃຊ້ທີ່ດິນ ຂອງບ້ານ ຕາມ 8 ປະເພດ ການນຳໃຊ້ທີ່ດິນ
2. ສຳຫຼວດ ຂອບເຂດແດນບ້ານ ເພື່ອປັກຫຼັກໝາຍ ຂອບເຂດການປົກຄອງຂອງບ້ານ
3. ສ້າງແຜນທີ່ ການຈັດສັນທີດິນ ແລະ ປັກຫຼັກໝາຍເຂດແດນບ້ານ

## 2. ລະດັບຄາດໝາຍ

1. ເຮັດໃຫ້ ບ້ານ ພູຊ້າງຄຳ ມີແຜນຈັດສັນທີ່ດິນ ແລະ ແຜນທີ່ຂອບເຂດການປົກຄອງຂອງບ້ານ ທີ່ຖືກຮັບຮອງຢ່າງເປັນທາງການ ໂດຍທ່ານເຈົ້ານະຄອນຫຼວງພະບາງ ຜ່ານຄວາມເປັນເອກະພາບຈາກບັນດາ ຂະ ແໜງການກ່ຽວຂ້ອງຂັ້ນນະຄອນ ແລະ ອົງການປົກຄອງບ້ານ ຊຶ່ງມີການເຂົ້າຮ່ວມຂອງປະຊາຊົນພາຍໃນບ້ານ.

2. ແຜນທີ່ຈັດສັນ ແລະ ພັດທະນາທີ່ດິນຂອງ ບ້ານ ພູຊ້າງຄຳ ໄດ້ຖືກພິມໃສ່ແຜ່ນໂຄສະນາ ແລະ ຖືກຕິດຕັ້ງໄວ້ຢູ່ບ້ານ ເພື່ອໃຫ້ ສາມາດເຫັນໄດ້ຢ່າງຈະແຈ້ງ.

3. **ຂັ້ນຕອນການຈັດຕັ້ງປະຕິບັດ**

❖ **ຂັ້ນຕອນທີ່ 1 ຂັ້ນຕອນການກະກຽມ**

- ກະກຽມ ບັນດາເອກະສານນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການຈັດສັນທີ່ດິນ ເພື່ອກຳນົດຈຸດໃນການປັກຫຼັກໝາຍເຂດແດນຂອງບ້ານ.
- ລົງເຜີຍແຜ່ ແລະ ເປີດກອງປະຊຸມປຶກສາຫາລືຄວາມເປັນເອກະພາບໃນການລົງຈັດຕັ້ງປະຕິບັດໃນຄັ້ງວັນທີ 9 / 12 / 2024.
- ລົງພາກສະໜາມຕົວຈິງເພື່ອສຳຫຼວດຈຸດທີ່ໄດ້ກຳນົດໄວ້

❖ **ບາດກ້າວທີ 2:ການສ້າງແຜນຈັດສັນທີ່ດິນ**

- ນຳຂໍ້ມູນທີ່ໄດ້ຈາກການລົງສະໜາມຕົວຈິງເຂົ້າໃນແຜນທີ່
- ສ້າງແຜນທີ່ ການນຳໃຊ້ທີ່ດິນໃນປະຈຸບັນ

❖ **ບາດກ້າວທີ່ 3: ສະເໜີຜ່ານຮ່າງແຜນຈັດສັນທີ່ດິນ**

- ສະເໜີ ຮ່າງແຜນຈັດສັນທີ່ດິນ ແລະ ການນຳນົດຈຸດປັກຫຼັກໝາຍເຂດແດນບ້ານ
- ປັບປຸງ ແຜນຈັດສັນຕາມການສະເໜີ ຂອງບັນດາຄະນະກຳມະການ ແລະ ອຳນາດການປົກຄອງບ້ານ

❖ **ບາດກ້າວທີ່ 4: ຮັບຮອງແຜນຈັດສັນທີ່ດິນ**

- ຮັບຮອງແຜນຈັດສັນທີ່ດິນທີ່ໄດ້ຮັບການປັບປຸງ ໄປຕາມແຕ່ລະຂັ້ນຕອນ

## II. ສະພາບລວມຂອງບ້ານ

1. ປະຫວັດຄວາມເປັນມາຂອງບ້ານ

ບ້ານ ພູຊ້າງຄຳ ແມ່ນບ້ານໜຶ່ງເຊິ່ງຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງ, ມີເນື້ອທີ່ ລວມທັງ 284,35 ເຮັກຕາ, ບ້ານ ພູຊ້າງຄຳ ເຊິ່ງປະກອບມີ 733 ຄອບຄົວ, ມີພົນລະເມືອງທັງໝົດ 4.454 ຄົນ, ຍິງ 2012 ຄົນ, ມີ 39 ໜ່ວຍຄຸ້ມຄອງ, ເຜົ່າລາວລຸ່ມ ມີ 359 ຄອບຄົວ, ມີພົນລະເມືອງທັງໝົດ 2286 ຄົນ, ຍິງ 867 ຄົນ, ເຜົ່າກຶມມຸ ມີ 131 ຄອບຄົວ, ມີພົນລະເມືອງທັງໝົດ 901 ຄົນ, ຍິງ 308 ຄົນ, ເຜົ່າມົ້ງ ມີ 212 ຄອບຄົວ, ມີພົນລະເມືອງທັງໝົດ 1267 ຄົນ, ຍິງ 722 ຄົນ.

2. ດ້ານການປົກຄອງ

ໜ່ວຍພັກ ບ້ານ ພູຊ້າງຄຳ ແມ່ນໜ່ວຍພັກເອກະລາດ ມີໜ້າທີ່ຊີ້ນຳ-ນຳພາ ໂດຍກົງຮອບດ້ານ ຢູ່ ບ້ານ ພູຊ້າງຄຳ ເຊິ່ງປະກອບມີ 733 ຄອບຄົວ, ມີພົນລະເມືອງທັງໝົດ 4.454 ຄົນ, ຍິງ 2012 ຄົນ, ມີ 39 ໜ່ວຍຄຸ້ມຄອງ, ເຜົ່າລາວລຸ່ມ ມີ 359 ຄອບຄົວ, ມີພົນລະເມືອງທັງໝົດ 2286 ຄົນ, ຍິງ 867 ຄົນ,ເຜົ່າກຶມມຸ ມີ 131 ຄອບຄົວ, ມີພົນລະເມືອງທັງໝົດ 901 ຄົນ, ຍິງ 308 ຄົນ, ເຜົ່າມົ້ງ ມີ 212 ຄອບຄົວ, ມີພົນລະເມືອງທັງໝົດ 1267 ຄົນ, ຍິງ 722 ຄົນ.ຄາດໝາຍລວມ ແມ່ນສ້າງໃຫ້ໜ່ວຍພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນທັງ 4 ດ້ານ, ຕັ້ງໜ້າສູ້ຊົນປະຕິບັດໜ້າທີ່ນຳພາຮອບດ້ານຂອງໜ່ວຍພັກຕາມ 5 ເນື້ອໃນໃຫ້ບັນລຸຕາມລະດັບຄາດໝາຍ ທີ່ໜ່ວຍພັກວາງອອກໃຫ້ປະກົດຜົນເປັນຈິງ.

3. ດ້ານການຄຸ້ມຄອງ

ບ້ານ ພູຊ້າງຄໍາ ແມ່ນບ້ານໜຶ່ງທີ່ຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງ ມີເຂດແດນ ຕິດກັບ 4 ບ້ານ ຄື: ເໜືອ ຕິດກັບ ສະໜາມບິນສາກົນຫຼວງພະບາງ, ທິດໃຕ້ ຕິດກັບ ບ້ານ ວັງເງິນ ແລະ ບ້ານ ນູນສະຫວາດ, ທິດຕາເວັນອອກ ຕິດກັບ ບ້ານ ພູເຫຼັກຈະເລີນ, ທິດຕາເວັນຕົກ ຕິດກັບ ບ້ານ ຫາດຫ່ຽນ.

❖ ທິດເໜືອ ຕິດກັບ ສະໜາມບິນຫຼວງພະບາງ

ຕາຕະລາງ 1 ເຂດແດນ ຕິດກັບ ສະໜາມບິນຫຼວງພະບາງ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 201368 | 2200677 | ທາງຮ່ອມຂຶ້ນພະແນກ ໄປສະນີ |
| 2 | 200838 | 2200678 | ສີ່ແຍກ (ຮ້ານຂາຍເຄື່ອງການກະເສດ) |

ຕາຕະລາງ 2 ເຂດແດນ ຕິດກັບ ບ້ານ ວັງເງິນ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 204915 | 2202736 | ແຈຮ່ອງຫ້ວຍ ຫນ້າບໍລິສັດ ນ້ຳປະປາ ເອເຊຍ |

ຕາຕະລາງ 3 ເຂດແດນ ຕິດກັບ ບ້ານ ນູນສະຫວາດ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 206599 | 2203076 | ຈຸດລວມຊາຍແດນຂອງ 3 ບ້ານ |

❖ **ທິດຕາເວັນອອກ ຕິດກັບ ບ້ານ ພູເຫຼັກຈະເລີນ**

ຕາຕະລາງ 4 ເຂດແດນ ຕິດກັບ ບ້ານ ພູເຫຼັກຈະເລີນ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 204937 | 2204425 | ຕິດຮົ້ວສະຫນາມ |

❖ **ທິດຕາເວັນຕົກ ຕິດກັບ ບ້ານ ຫາດຫ່ຽນ**

ຕາຕະລາງ 5 ເຂດແດນ ຕິດກັບ ບ້ານ ຫາດຫ່ຽນ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 204462 | 2203402 | ສາມແຍກຫົວພູ |
| 2 | 204521 | 2203887 | ແຈຮົ້ວຫ້ອງການ ຂະແໜງ ອຸຕຸນິຍົມ |

4. **ສະພາບການນຳໃຊ້ທີ່ດິນ**

ບ້ານ ນາສ້າງເຫວີຍ ເປັນບ້ານໜຶ່ງທີ່ນອນຢູ່ໃນ ຈໍານວນບ້ານ ຂອງ ນະຄອນຫຼວງພະບາງ, ການນຳໃຊ້ທີ່ດິນກວມສ່ວນຫຼາຍ ແມ່ນ ທີ່ດິນປ່າໄມ້ ກວມເອົາ 50,2 % ຂອງເນື້ອທີ່ດິນທັງໝົດ, ນອກຈາກນີ້ຍັງມີທີ່ດິນກະສິກໍາ, ທີ່ດິນປຸກສ້າງ, ທີ່ດິນວັດທະນະທໍາ, ທີ່ດິນອຸດສາຫະກໍາ, ທີ່ດິນໂຍທາທິການ ແລະ ທີ່ດິນບໍລິເວນນ້ຳ ເຊິ່ງມີລາຍລະອຽດດັ່ງນີ້:

❖ **ປະເພດທີ່ ກະສິກຳ**

ປະເພດທີ່ດິນ ກະສິກຳ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 16,48 ກວມເອົາ 5,8 % ເປັນປະເພດດິນນາ.

❖ **ປະເພດທີ່ດິນປຸກສ້າງ**

ປະເພດທີ່ດິນປຸກສ້າງ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 108,34 ເຮັກຕາ, ປະກອບມີ 3 ປະເພດຄື: ທີ່ດິນປຸກສ້າງ ສ່ວນບຸກຄົນ 99,55 ເຮັກຕາ, ກວມເອົາ 35,01%, ທີ່ດິນປຸກສ້າງ ຂອງລັດ 0,92 ເຮັກຕາ, ກວມເອົາ 0,32% ແລະ ທີ່ດິນຂະຫຍາຍການປຸກສ້າງ ມີເນື້ອທີ່ 7,87 ເຮັກຕ່າ, ກວມເອົາ 2,77 %.

❖ **ປະເພດທີ່ດິນວັດທະນະທຳ**

ປະເພດທີ່ດິນວັດທະນະທຳ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 2 ເຮັກຕາ, ກວມເອົາ 0,7 %.

❖ **ປະເພດທີ່ດິນ ປ່າໄມ້**

ປະເພດ ທີ່ດິນ ປ່າໄມ້ ມີ ເນື້ອທີ່ 142,74 ເຮັກຕ່າ, ກວມເອົາ 50,20% ເຊິ່ງປະກອບມີ 3 ປະເພດຄື: ທີ່ດິນປ່າສະຫງວນ ມີເນື້ອທີ່ 1,25 ເຮັກຕາ, ກວມເອົາ 0,44%, ທີ່ປົນປ່າປ້ອງກັນ ມີເນື້ອທີ່ 101,53 ເຮັກຕາ, ກວມເອົາ 35,71% ແລະ ທີ່ດິນປູກໄມ້ອຸກສາຫະກຳ ມີເນື້ອທີ່ 39,96 ເຮັກຕາ, ກວມເອົາ 14,05%

❖ **ປະເພດທີ່ດິນໂຍທາ**

ປະເພດທີ່ດິນ ໂຍທາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 81,8 ເຮັກຕາ, ກວມເອົາ 5,09% ປະກອບມີ 3 ປະເພດຄື: ທີ່ດິນທາງປູຢາງ ມີເນື້ອທີ່ 8,93 ເຮັກຕາ, ກວມເອົາ 3,14%, ທີ່ດິນທາງດິນແດງ 2,20 ເຮັກຕາ, ກວມເອົາ 0,77% ແລະ

ຕາຕະລາງ 6 ປະເພດ ການນຳໃຊ້ທີ່ດິນຂອງບ້ານ

| ລ/ດ | ປະເພດດິນ | ລະຫັດ | ເນື້ອທີ່ | ເປີເຊັນ (%) |
|---|---|---|---|---|
| I | **ທີ່ດິນກະສິກຳ** | AZ | 16.48 | 5.8 |
| 1 | ດິນນາ | AZ_1 | 16.48 | 5.8 |
| II | **ທີ່ດິນປຸກສ້າງ** | BZ | 108.34 | 38.1 |
| 1 | ດິນປຸກສ້າງສ່ວນບຸກຄົນ | BZ_1 | 99.55 | 35.01 |
| 2 | ທີ່ດິນໂຮງຮຽນ | BZ_2 | 0.92 | 0.32 |
| 2 | ທີ່ດິນຂະຫຍາຍການປຸກສ້າງ | BZ_3 | 7.87 | 2.77 |
| III | **ທີ່ດິນວັດທະນະທຳ** | CZ | 2 | 0.7 |
| 1 | ທີ່ດິນວັດທະນະທຳ | CZ_1 | 2 | 0.7 |
| IV | **ທີ່ດິນປ່າໄມ້** | FZ | 142.74 | 50.2 |
| 2 | ທີ່ດິນປ່າສະຫງວນ | FZ_2 | 1.25 | 0.44 |
| 3 | ທີ່ດິນປ່າປ້ອງກັນ | FZ_3 | 101.53 | 35.71 |
| 4 | ທີ່ດິນປູກໄມ້ອຸດສາຫະກຳ | FZ_5 | 39.96 | 14.05 |
| V | ດິນອຸດສາຫະກຳ | IZ | 1.21 | 0.43 |
| 1 | ທີ່ດິນອຸດສາຫະກຳ (ໂຮງງານນ້ຳປະປາ) | IZ_2 | 1.21 | 0.43 |
| VI | **ທີ່ດິນໂຍທາ** | RZ | 11.15 | 3.92 |
| 1 | ທາງປູຢາງ | RZ_1 | 8.93 | 3.14 |

| | | | | |
|---|---|---|---|---|
| 2 | ທາງດິນແດງ | RZ_2 | 2.2 | 0.77 |
| 3 | ທາງດິນແດງ | RZ_5 | 0.02 | 0.01 |
| VII | ທີ່ດິນບໍລິເວນນໍ້າ | WZ | 2.43 | 0.85 |
| 1 | ແມ່ນໍ້າ | WZ_1 | 2.11 | 0.74 |
| 2 | ທີ່ດິນສະຫງວນແຄມນໍ້າ | WZ_4 | 0.32 | 0.11 |

5. **ດ້ານເສດຖະກິດສັງຄົມ**

1. ຊຸກຍູ້ສົ່ງເສີມການປູກຝັງ-ລ້ຽງສັດ, ການຄ້າ-ຂາຍ, ການບໍລິການ-ຂົນສົ່ງ ຢ່າງແຂງແຮງ, ບ້ານເພື່ອເຮັດໃຫ້ເກີດຜົນປະໂຫຍດແກ່ຄອບຄົວ, ເອົາໃຈໃສ່ແກ່ຄອບຄົວທີ່ທຸຍາກ ເພື່ອໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກລົງເທື່ອລະກ້າວ.
2. ຊອກແຫຼ່ງທຶນເພື່ອຕໍ່ເຕີມຫໍປະຊຸມບ້ານ.
3. ສືບຕໍ່ຄຸດຄົ້ນແຫຼ່ງລາຍຮັບຢູ່ພາຍໃນບ້ານເປັນຕົ້ນແມ່ນ ພາສີທີ່ດິນ ແລະ ອື່ນໆ, ສົ່ງໃຫ້ຫ້ອງການ-ການເງິນນະຄອນເປັນປົກກະຕິ.
4. ຕັ້ງໜ້າຊຸກຍູ້ໃຫ້ແຕ່ລະຄອບຄົວມີການພັດທະນາອາຊີບຂອງຕົນ, ໃຫ້ກາຍເປັນອາຊີບທີ່ແນ່ນອນໃຫ້ມີລາຍຮັບເຂົ້າ ແຕ່ລະຄອບເປັນປົກກະຕິ.

6. **ດ້ານວັດທະນະທຳຮີດຄອງປະເພນີ**

ໄດ້ຊຸກຍູ້ປະຊາຊົນບັນດາເຜົ່າ ພາຍໃນບ້ານອານຸລັກປົກປັກຮັກສາເສີມ ຂະຫຍາຍຮີດຄອງປະເພນີອັ ນດີງາມຂອງເຜົ່າ, ຂອງບ້ານ ໃນການຂະນົບທຳນຽມອັນດີງາມຂອງຊາດຂອງເຜົ່າເປັນປົກກະຕິ ຕາມຮີດ 12 ຄອງ 14 ການເຮັດບຸນກຸດສົງການປີໃໝ່ລາວ,ບຸນເຖີຂອງເຜົ່າກຶມມຸ,ບຸນກິນຈຽງຂອງເຜົ່າມົ້ງ,ບຸນສິນກິນທານແລະ ບຸນອື່ນໆ.

7. **ດ້ານວຽກງານວັດທະນະທຳ - ສັງຄົມ**

ປຸກລະດົມຊຸກຍູ້ ແລະ ສົ່ງເສີມ, ສຶກສາອົບຮົມ ແລະ ແນະນຳໃຫ້ພໍ່ແມ່ນັກຮຽນແຕ່ລະຄອບຄົວຕ້ອງປະກອບສ່ວນເຂົ້າໃນວຽກງານສຶກສາຄື ຕິດຕາມການຮຽນຂອງລູກຕົນ ແລະ ການໄປຮຽນແຕ່ລະມື້ໃຫ້ເປັນປົກກະຕິ ເພື່ອບເຮັດໃຫ້ເດັກເກນອາຍຸໃນໄວຮຽນໃຫ້ໄດ້ເຂົ້າໂຮງຮຽນ 100% ແລະ ຮັບປະກັນບໍ່ມີເດັກປະລະການຮຽນໃນກາງປີ.

ຝຶກອົບຮົມ ອສບ ບ້ານໃຫ້ມັນຫລາຍຂຶ້ນ ເພື່ອຈະຊ່ວຍອົບຮົມໃຫ້ພໍ່ແມ່ປະຊາຊົນຮູ້ຈັກການຮັກອານາໄມ 3 ສະອາດ ແລະ ທັງເປັນການຮັບປະກັນໃຫ້ແມ່ຍິງ ແລະ ເດັກເກນອາຍຸໄດ້ຮັບການສັກຢາ, ຢອດຢາ ແລະ ໄປສັກຢາຕ້ານພະຍາດໂຄວິດ -19 ໃຫ້ຄົບຖ້ວນ 100%. ສ້າງຂະບວນການອານາໄມທຳລາຍແຫຼ່ງເພາະພັນຍຸງລາຍ. ປົກປັກຮັກສາບ້ານແບບຢ່າງສາທາລະນະສຸກໃຫ້ຍືນຍົງຄົງຕົວຢູ່ຕະຫລອດໄປ.

8. **ດ້ານວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ**

ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນວຽກງານໜຶ່ງ ທີ່ສຳຄັນ, ເພື່ອຮັບປະກັນໃຫ້ທົ່ວບ້ານມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ເພື່ອຕອບຕ້ານເລລ່ຽມກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ກຳຈັດປະກົດ

ການຫຍໍ້ທໍ້ຕ່າງໆພວກເຮົາໄດ້ຈັດຕັ້ງເຜີຍແຜ່ກົດໝາຍ, ກົດລະບຽບຂອງບ້ານ, ນຳພາສ້າງບ້ານປອດຄະດີ, ປອດຢາເສບຕິດ, ຊີ້ນຳໜ່ວຍໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງຂອງປະຊາຊົນພາຍໃນບ້ານ, ໂດຍການສຶກສາອົບຮົມຈຳແນກຄວາມຜິດ ຄວາມຖືກ, ລະງັບຄວາມຜິດຂ້ອງຕ້ອງຖຽງກັນພາຍໃນບ້ານ, ແນໃສ່ເພີ້ມຄວາມສາມັກຄີ,ຄວາມຖືກຕ້ອງປ່ອງດອງແລະ ຊ່ວຍເຫຼືອກັນພາຍໃນບ້ານ, ໄດ້ຊີ້ນຳກຳລັງປ້ອງກັນ - ກອງຫຼອນໃຫ້ເຄື່ອນໄຫວຕາມພາລະໜ້າທີ່, ຈັດຕັ້ງຈຸໜ່ວຍຍາມບ້ານຮັບປະກັນຄວາມສະຫງົບປອດໄພໃຫ້ແກ່ປະຊາຊົນບັນດາເຜົ່າ.




ຮູບທີ 1: ປະເພດທີ່ດິນ ຂອງບ້ານ ພູຊ້າງຄຳ



ຮູບທີ 2: ຮູບພາບກະກຽມກ່ອນ ລົງສຳຫຼວດພາກສະໜາມ



ຮູບທີ 3: ຮູບພາບລົງສຳຫຼວດພາກສະໜາມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ..01...../ນພພບຫ.

# ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານ ພູເຫຼັກຈະເລີນ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານ ພູເຫຼັກຈະເລີນ ຄັ້ງວັນທີ ...............................

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນຍາວ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 204937 | 2204425 | ຕິດຮົ້ວສະໜາມ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ......................... ພະຍານ ບ້ານ.........................................

ສີໄຊ ພູມປັນຍາ
Sixay PHOUMPANYA

2. ນາຍບ້ານ ບ້ານ.ພູເຫຼັກຈະເລີນ ພະຍານ ບ້ານ.........................................

ສົມພັນ ຈິດຕະວົງສາ
Somphanh CHITTAVONGSA

ເຈົ້ານະຄອນຫຼວງພະບາງ | ຫົວໜ້າ ຫ້ອງການພາຍໃນ | ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Viengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ
Mr Souphanousith AROUNE

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ　　　　　　　　　　　　　　　　　　　ເລກທີ.01....../ ນຂພດ

## ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານ ນຸນສະຫວາດ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຊ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.
- ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານນຸນສະຫວາດ ຄັ້ງວັນທີ ............................

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນຍາວ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໃດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 206599 | 2203076 | ຈຸດລວມຊາຍແດນຂອງ 3 ບ້ານ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ.................................　　　　ພະຍານ ບ້ານ.......................................

ສີໄຊ ພູມປັນຍາ
Sixay PHOUMPANYA

2. ນາຍບ້ານ ບ້ານ.................................　　　　ພະຍານ ບ້ານ.......................................

ບຸນທັນ ວັນນະພົມ

ເຈົ້ານະຄອນຫຼວງພະບາງ　　　　ຫົວໜ້າ ຫ້ອງການພາຍໃນ　　　　ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Vlengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ
Mr Souphanousith AROUN

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ                                                        ເລກທີ...01...../ [illegible]

**ບົດບັນທຶກ**

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານ ວັງເງິນ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານ ວັງເງິນ ຄັ້ງວັນທີ ...........................

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 204915 | 2202736 | ແຈຮ່ອງຫ້ວຍ ໜ້າບໍລິສັດ ນ້ຳປະປາ ເອເຊຍ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ.................... ພະຍານ ບ້ານ..........................................

ສີໄຊ ພູມປັນຍາ
Sixay PHOUMPANYA

2. ນາຍບ້ານ ບ້ານ.................... ພະຍານ ບ້ານ..........................................

ບຸນຍັງ ດວງພະຈັນ

ເຈົ້ານະຄອນຫຼວງພະບາງ          ຫົວໜ້າ ຫ້ອງການພາຍໃນ          ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Viengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ
Mr Souphanousith AROUNE

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ..01...../ ນບຂພບ.

# ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານ ຫາດຫ່ຽນ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ພູຊ້າງຄຳ ແລະ ບ້ານ ຫາດຫ່ຽນ ຄັ້ງວັນທີ .............................

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນຍາວ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 204462 | 2203402 | ສາມແຍກຫົວພູ |
| 2 | 204521 | 2203887 | ແຈຮົ້ວຫ້ອງການ ຂະແໜງ ອຸຕຸນິຍົມ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ...................... ສີໄຊ ພູມປັນຍາ Sixay PHOUMPANYA — ພະຍານ ບ້ານ........................................

2. ນາຍບ້ານ ບ້ານ........................ — ພະຍານ ບ້ານ........................................

| ເຈົ້ານະຄອນຫຼວງພະບາງ | ຫົວໜ້າ ຫ້ອງການພາຍໃນ | ຫົວໜ້າ ຫ້ອງການ ຊສ ນະຄອນ |
|---|---|---|
| ວຽງທອງ ຫັດສະຈັນ Vliengthong HATSACHANH | ສົມອົກ ມະນີຈັນ / ນ. ແສງທອງ ລາທິພົງ | ສຸພານຸສິດ ອາລຸນ Mr Souphanousith AROUNE |

ຕັ້ງປະຕິບັດໂດຍ

ສະໜັບສະໜູນ

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານ
ລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project